ກຳລັງທັບເສລີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento, CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສລີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສລີປະຊາທິປະໄຕລາວ.**

**ເລກທີ ໔໙໔/ປພຖຂ/໐໕໑໙໑໐**

# ບົດຄວາມ

# ທ່ານ ຈູມມະລີ ໄຊຍະສອນ

# ເປັນສັດຕູ ເສຣີພາບ ດ້ານຂ່າວສານ.

ບໍ່ເວັ້ນແຕ່ລະປີ, ຜູ້ນຳພັກຣັດ ສປປລາວ. ຖືກອົງການຈັດຕັ້ງສາກົນ ກ່າວປະນາມ ກ່ຽວກັບການລະເມີດ ດ້ານສິດທິເສຣີພາບ ຂອງພົລເມືອງຕົນເອງມາໂດຍຕລອດ. ໃນປີ 2007, ວາຣະສານ Parade.com ໄດ້ລົງຂ່າວວ່າ "ທ່ານ ຈູມມະລີ ໄຊຍະສອນ ປະທານປະເທດ ສປປລາວ. ເປັນຜເດັດການສຸດຂີດ ຜູ້ທີ່ 16 ຢູ່ໃນໂລກ, ຊຶ່ງມີທັງໝົດ 20 ຄົນ ຢູ່ໃນ 20 ປະເທດ ແລະໃນປີນີ້, ອົງການຂ່າວ ບໍ່ມີພົມແດນ ກໍຊຽນຢູ່ໃນຣາຍງານປະຈຳປີ ວ່າ ທ່ານ ເປັນຜູ້ນຶ່ງໃນຈຳນວນ 40 ທ່ານ ທີ່ຕ້ານສິດທິເສຣີພາບ ໃນດ້ານຂ່າວສານ". ສ່ວນທ່ານ ບຸນຍັງ ວໍຣະຈິດ ຮອງປະທານປະເທດ, ວາຣະສານ Parade.com ໃນປີນີ້, ກໍລົງຂ່າວວ່າ "ເປັນຜເດັດການສຸດຂີດ ຜູ້ທີ 20 ທີ່ມີຢູ່ໃນໂລກນີ້ ອີກເໝືອນກັນ.

ໃນວັນສິດທິເສຣີພາບຂ່າວສານສາກົນ ( 3/5/10) ທ່ານ ບານກີ ມູນ ເລຂາທິການໃຫຍ່ ອົງການສະຫະປະຊາຊາດ ກ່າວວ່າ **"ໃນຍຸກແຫ່ງການໂທຣະຄົມມະນາຄົມຂ່າວສານ ກ້າວໜ້າທັນສມັຍນີ້, ຍັງມີ ຣັຖບານ ບາງປະເທດ ຂອກຊ່ອງທາງກີດກັ້ນ ການອອກຂ່າວສານຢ່າງເສຣີ ໃນປະເທດຂອງຕົນຢູ່** ".

ອັນນີ້, ເປັນຄວາມເວົ້າ ທີ່ຖືກຕ້ອງທີ່ສຸດແລ້ວ! ໂດຍສະເພາະຢູ່ໃນລາວ, ໜັງສືພິມ " ສຽງປະຊາຊົນ ວຽງຈັນໃໝ່" ແລະໜັງສືພິມຣາຍວັນຕ່າງໆ ຖືກຄວບຄຸມ ແລະຊີ້ແນະ ຈາກພັກຣັດທັງນັ້ນ. ນັກຂ່າວ ບໍ່ມີສິດ ທີ່ຈະເວົ້າ ຕາມຄວາມຄິດຄວາມເຫັນ ຫລືຣາຍງານຕາມຄວາມເປັນຈິງໄດ້. ນັກໜັງສືພິມ ມີໜ້າທີ່ຣາຍງານ ໃນສິ່ງທີ່ພັກຣັດ ຕ້ອງການໃຫ້ເວົ້າໃຫ້ຂຽນເທົ່ານັ້ນເອງ. ໂດຍສະເພາະ ແມ່ນໃຫ້ຍ້ອງຍໍສັລເສີນພັກຣັດ ແຕ່ ຝ່າຍດຽວ. ທັງໆທີ່ເຫັນຢູ່ຕໍ່ໜ້າຕາ, ການກະທຳຂອງພັກຣັດນັ້ນ ມີລັກສນະບໍ່ດີ; ຂາດຄວາມຍຸຕິທັມ, ກີດກັ້ນ

ສິດທິເສລີພາບ ຂອງປະຊາຊົນ, ກີດກັ້ນຂ່າວສານ, ກີດກັ້ນການເຊື່ອຖືສາສນາ ແລະກີດກັ້ນ ບໍ່ໃຫ້ປະຊາຊົນໄດ້ຮັບໂອກາດ ໃນການສ້າງສາທຳມາຫາກິນ ຢ່າງເທົ່າທຽມກັນ....ແຕ່ນັກຂ່າວ ກໍບໍ່ສາມາດຈະນຳຄວາມຈິງເຫລົ່ານັ້ນ ມາລົງເຜີຍແຜ່ ໃຫ້ປວງຊົນ ໄດ້ຮູ້ເຫັນນຳ ເພາະຖືວ່າ ເປັນການຕ້ານພັກ, ຕ້ານຣັດມີໂທດເຖິງຕາຍ.

ການທີ່ປະທານປະເທດ ເປັນຫົວໜ້າ ນຳພາການລະເມີດ ສິດທິເສລີພາບ ຂອງປະຊາຊົນດັ່ງນີ້, ນອກຈາກເປັນການທຳລາຍກຽດສັກສີ ຂອງຊາດ ຢູ່ໃນເວທີສາກົນແລ້ວ, ຍັງເຮັດໃຫ້ປະຊາຊົນ ຢູ່ພາຍໃນປະເທດ ໄດ້ຮັບຄວາມເດືອດຮ້ອນແສນສາຫັດຕື່ມອີກ. -ພວກເຂົາ ບໍ່ໄດ້ຮັບການເອົາໃຈໃສ່ຊ່ວຍເຫລືອ, ບໍ່ໄດ້ມີໂອກາດເຂົ້າເຖິງການຊ່ວຍເຫລືອ ປັບປຸງຊີວິດການເປັນຢູ່ຂອງຕົນໃຫ້ດີຂຶ້ນ ຄືກັນກັບພວກລູກຫລານຂອງຄນະພັກຣັດ, ຂອງຜູ້ມີອຳນາດອິດທິພົນຢ່າງສິ້ນເຊີງ. ໂອກາດທີ່ລູກຫລານ ໃນວັຍຮຽນ ຈະໄດ້ເຂົ້າໂຮງຮຽນ, ຈະໄດ້ຮັບການປິ່ນປົວ ໃນຍາມເຈັບເປັນເທົ່າທີ່ຄວນ ແມ່ນບໍ່ມີເລີຍ!. ປະຊາຊົນສາມັນທັມດາ ໄດ້ກາຍເປັນບຸກຄົນ ທີ່ພັກຣັດຈ້ອງມອງ ເພື່ອຈັບຄວາມຜິດ, ຖືກປັບໃໝໃສ່ໂທດ ເພື່ອອ້າງເອົາເຫດການອັນນີ້ໄປຫລອກລວງຕາຊາວໂລກວ່າ "ສປປລາວ" ມີການປົກຄອງກັນ ດ້ວຍກົດໝາຍຢ່າງເຄັ່ງຄັດ, ມີຄວາມເຂັ້ມງວດ ໃນການປະຕິບັດກົດໝາຍ...ແຕ່ໃນຄວາມເປັນຈິງແລ້ວ! ຄນະພັກຣັດຜູ້ມີອຳນາດອິດທິພົນ ຕລອດຮອດລູກຫລານ, ຈຸ້ມເຈື້ອວົງຕະກຸນຂອງພວກເຂົາ ແລະຊາວຕ່າງດ້າວຢູ່ໃນລາວນັ້ນ, ເຖິງຈະປະຕິບັດຜິດກົດໝາຍ ຫລາຍປານໃດ....ກໍບໍ່ມີໃຜກ້າແຕະຕ້ອງຫລືຈັບກຸມ ພວກເຂົາມາລົງໂທດໄດ້.

ພວກເຮົາ ປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດເຫັນວ່າ "ຄຳຮຽກຮ້ອງ ຂອງທ່ານ ບັນກີ ມູນ ເລຂາທິການໃຫຍ່ ອົງການສະຫະປະຊາຊາດ **ໃຫ້ຣັຖບານ ແລະພາກສ່ວນຕ່າງໆໃນທົ່ວໂລກ ໄດ້ລຸກຂຶ້ນມາຕໍ່ສູ້ ເພື່ອສິດເສຣີພາບທັງດ້ານຂ່າວສານໃນປະເທດຂອງຕົນ ໃຫ້ເປັນໄປຕາມຄຳຂວັນ ທີ່ທ່ານໃຫ້ຊື່ວ່າ "ເປັນວັນແຫ່ງສິດເສຣີພາບ ໃນການອອກຂ່າວ ແລະສິດທິ ໃນການຢາກຟັງ ແລະຢາກຮູ້ຢາກເຫັນ ຢ່າງເສຣີ ຂອງປະຊາຊົນໃນທົ່ວໂລກ**". ຄຳຮຽກຮ້ອງອັນນີ້, ມີຄວາມໝາຍເລິກເຊິ່ງ, ບົ່ງບອກເຖິງບັ້ນເປັນ ບັ້ນຕາຍ ຂອງພັກຣັດ ສປປລາວ ຢ່າງຈະແຈ້ງທີ່ສຸດ!. ມັນໝາຍເຖິງ ໃຫ້ພັກຣັດຢຸດຕິການບໍຣິຫານປະເທດຊາດ ແບບຜເດັດການພັກດຽວ ອີກຕໍ່ໄປ ແລະໃຫ້ຫັນໜ້າ ເຂົ້າມາແກ້ໄຂບັນຫາລາວຕາມແນວທາງສັນຕິວິທີ ຮ່ວມກັນກັບພວກເຮົາໂດຍໄວ. ຖ້າຍັງເມີນເສີຍຢູ່....ບັນດາປະເທດເພື່ອນມິດໃນທົ່ວໂລກທີ່ເຄົາຣົບຕໍ່ສິດທິເສຣີພາບ ຂອງປະຊາຊົນ ກໍຈະບໍ່ຍອມຮັບຮູ້ ຣັຖບານຜເດັດການ ພາຍໃຕ້ການນຳພາຂອງພັກຣັດອີກຕໍ່ໄປ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໑໘ ພຶສພາ ໒໐໑໐.**